Lao

# ທ່ານເຄີຍຮູ້ບໍ່ວ່າ?...



## ດຽວນີ້ ທ່ານສາມາດປ້ອງກັນລູກທີ່ບໍ່ທັນເກີດຂອງທ່ານຈາກ **ໂຣກ ໄອໄກ່** ໄດ້ນັບຈາກມື້ທີ່ນີ້ງ.

- ການສຶກສາໄດ້ຄົ້ນພົບວ່າ ການສັກຢາປ້ອງກັນໂຣກໄອໄກ່ໃນຊ່ວງລະຍະການຖືພາ ມີຄວາມປອດພັຍ ແລະ ມີ ປະສິດທິຜົນສໍາລັບທັງແມ່ ແລະ ເດັກ.
- ການສັກຢາປ້ອງກັນໂຣກໃນຊ່ວງລະຍະຖືພາ (ໃຫ້ດີແທ້ແມ່ນ ຕອນ28ອາທິດ) ຊຶ່ງໝາຍຄວາມວ່າຮ່າງກາຍ ຂອງທ່ານຈະຜລິດພູມປ້ອງກັນຊຶ່ງຈະຜ່ານເຂົ້າໄປຫາລູກຂອງທ່ານໃນທ້ອງກ່ອນເກີດ. ພູມປ້ອງກັນເຫຼົ່ານີ້ຈະ ຄຸ້ມຄອງລູກຂອງທ່ານຈົນກວ່າພວກເຂົາຈະພ້ອມທີ່ຈະໄດ້ຮັບການສັກຢາປ້ອງກັນໂຣກຂອງພວກເຂົາເອງຕອນ ມີອາຍຸ 6 ອາທິດ.
- ໂຣກ ໄອໄກ່ ເປັນໂຣກຕິດຕໍ່ອັນຮ້າຍແຮງດ້ວຍເຊື້ອແບັກທີເຣັຍທີ່ກໍ່ໃຫ້ເກີດການໄອຢ່າງຮຸນແຮງເປັນລະຍະ. ຜູ້ໃດກໍສາມາດຕິດເຊື້ອໂຣກນີ້ໄດ້ ແຕ່ມັນຮ້າຍແຮງກວ່າ (ແລະສາມາດເຖິງແກ່ຊີວິດໄດ້) ໃນເດັກທາຣົກ ໂດຍ ສະເພາະບັນດາ ເດັກທີ່ນ້ອຍຫຼາຍເກີນທີ່ຈະສັກຢາໄດ້.
- ນອກຈາກນີ້ແລ້ວ ມັນຍັງເປັນສິ່ງສໍາຄັນທີ່ໃຫ້ແນ່ໃຈວ່າສະມາຊິກຄອບຄົວຂອງທ່ານຜູ້ທີ່ຈະມີການພົວພັນກັບ ລູກຂອງທ່ານໄດ້ມີການຄຸ້ມກັນຈາກໂຣກໄອໄກ່ແລ້ວ. ໃຫ້ແນ່ໃຈອີກວ່າເດັກຄົນອື່ນໆໄດ້ຮັບການສັກຢາຖືກ ຕາມເວລາ ແລະ ຂໍໃຫ້ຜູ້ເບິ່ງແຍງແລະສະມາຊິກຄອບຄົວທີ່ໃກ້ຊິດຜູ້ທີ່ບໍ່ເຄີຍໄດ້ຮັບການສັກຢາປ້ອງກັນໂຣກ ໄອໄກ່ພາຍໃນ 10ປີທີ່ຜ່ານມານັ້ນ ຈົ່ງຂໍໃຫ້ພວກເຂົາສັກຢາປ້ອງກັນໂຣກໄອໄກ່ຢ່າງໜ້ອຍ ສອງອາທິດ ກ່ອນທີ່ພວກເຂົາຈະມາພົວພັນກັບລູກຂອງທ່ານ.
- ຖ້າທ່ານວາງແຜນວ່າຈະຖືພາ ຫຼື ໄດ້ຖືພາແລ້ວ ຈົ່ງໂອ້ລົມກັບນາຍໝໍຂອງທ່ານ, ກັບ ບໍຣິການການແພດ ສໍາລັບຊາວ ອາບໍຣິຈິໂນລ ຫຼື ຜູ້ໃຫ້ບໍຣິການອື່ນໆກ່ຽວກັບວ່າທ່ານຄວນສັກຢາປ້ອງກັນໂຣກອັນໃດແດ່ໃນຂະນະ ທີ່ທ່ານພວມຖືພາ.

| ຢາ ວັກຊີນ | ຄໍາແນະນໍາ |
|---|---|
| **ໂຣກ ໄອໄກ່** | ບັນດາຜູ້ຍິງທີ່ຖືພາໃນຊ່ວງໄຕຣມາດທີສາມ (ໃຫ້ດີແທ້ແມ່ນຕອນ 28 ອາທິດ) |
| **ໄຂ້ຫວັດ** | ບັນດາຜູ້ຍິງທີ່ຖືພາບໍ່ວ່າຕອນໃດໃນຊ່ວງລະຍະຖືພານັ້ນ ໂດຍສະເພາະພວກທີ່ຈະເຖິງຕອນໄຕຣມາດ ທີສອງ ຫຼື ທີສາມໃນຣະດູໄຂ້ຫວັດ |

NSW GOVERNMENT | Health

ເຂົ້າເບິ່ງ: **health.nsw.gov.au/protectnewborns**

# ການສັກຢາປ້ອງກັນໂຣກໃນຊ່ວງລະຍະຖືພາມີປະສິດທິຜົນເທົ່າໃດ?

ຖ້າຫາກປາສຈາກການສັກຢາປ້ອງກັນໂຣກໃນຊ່ວງລະຍະຖືພາ **50** ຄົນຂອງບັນດາເດັກທີ່ເກີດ ໃນທຸກໆປີຢູ່ໂຮງໝໍໃຫຍ່ ຈະເຈັບປ່ວຍຈາກໂຣກໄອໄກ່ - **40** ຄົນຂອງຈຳນວນນີ້ຈະຕ້ອງເຂົ້າໂຮງໝໍເນື່ອງມາຈາກ ອາການເຈັບປ່ວຍຂອງ ພວກເຂົາ.

ຖ້າຫາກຜູ້ຍິງໝົດທຸກຄົນທີ່ຄອດລູກຢູ່ໂຮງໝໍໄດ້ຮັບການສັກຢາປ້ອງກັນໂຣກໃນຊ່ວງລະຍະທີ່ພວກເຂົາຖືພາ ຈະມີເດັກພຽງ **4** ຄົນເທົ່ານັ້ນທີ່ຈະເປັນໂຣກໄອໄກ່ໃນປີນຶ່ງ.

*ໂຣກໄອໄກ່ ທີ່ **ປາສຈາກ** ການສັກຢາປ້ອງກັນໂຣກໃນຕອນຖືພາ*



*ໂຣກໄອໄກ່ ທີ່ **ມີ** ການສັກຢາປ້ອງກັນໂຣກໃນຕອນຖືພາ*





## ຫຼັງຈາກການເກີດຂອງລູກທ່ານ

### ດາວໂຫຼດໂຟນແອັປ ເອົາ “ຈົ່ງມື້ໄວ້ສຳລັບການສັກຢາ” (‘Save the Date to Vaccinate’)

ໂຟນແອັປ “ຈົ່ງມື້ໄວ້ສຳລັບການສັກຢາ” ມີຕາຕະລາງການສັກຢາເປັນສ່ວນຕົວ ແລະ ການເຕືອນຄວາມຈຳໄວ້ໃຫ້ວ່າຍາມໃດລູກທ່ານຕ້ອງສັກຢາ. ນອກຈາກນີ້ ທ່ານຍັງສາມາດເປີດເຂົ້າເບິ່ງເວັປໄຊຕ໌ “ຈົ່ງມື້ໄວ້ສຳລັບ ການສັກຢາ” ທີ່ **www.immunisation.health.nsw.gov.au** ເພື່ອເອົາຂໍ້ມູນທີ່ມີປໂຍດກ່ຽວກັບການສັກຢາ ຮວມທັງວິດີໂອຫຼາຍໆຢ່າງອີກດ້ວຍ.







NSW GOVERNMENT | Health

SHPN (CHP) 150135

ເຂົ້າເບິ່ງ: **health.nsw.gov.au/protectnewborns**